RECOFTC

# ແຜນຍຸດທະສາດ
## 2023-2028





ເອກະສານສຳຄັນ

ດ້ວຍປະສົບການ 36 ປີໃນຂົງເຂດປ່າໄມ້ຊຸມຊົນ, ອົງການລີຄອບ (RECOFTC) ເຮັດວຽກຢູ່ໃນພາກພື້ນອາຊີປາຊີຟິກ, ມີຫ້ອງການປະຈຳ ຢູ່ປະເທດກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມຽນມາ, ເນປານ, ໄທ ແລະ ຫວຽດນາມ. ວິໄສທັດຂອງພວກເຮົາແມ່ນໂລກທີ່ຊຸມຊົນມີຄວາມເຂັ້ມແຂງຕໍ່ ການປ່ຽນແປງດິນຟ້າອາກາດ ເຊິ່ງມີສິດໃນການພັດທະນາພູມມີທັດປ່າໄມ້ທີ່ພວກເຂົາຄຸ້ມຄອງຢ່າງຍືນຍົງ ແລະ ສະເໝີພາບ. ພາລະກິດຂອງພວກເຮົາແມ່ນເພື່ອເສີມສ້າງຄວາມອາດສາມາດ, ສົ່ງເສີມສິດ ແລະ ການປົກຄອງ ເພື່ອເຮັດໃຫ້ຄົນໃນທ້ອງຖິ່ນສາມາດຮັກສາ ແລະ ໄດ້ຮັບຜົນປະໂຫຍດຢ່າງເປັນທຳ ຈາກພູມມີທັດປ່າໄມ້ທີ່ຍືນຍົງ.

ພວກເຮົາໃຊ້ວິທີການທີ່ອີງໃສ່ພູມມີທັດໃນໄລຍະຍາວ, ແລະ ຄອບຄຸມ ເພື່ອສະໜັບສະໜູນຊຸມຊົນທ້ອງຖິ່ນໃນການປົກປ້ອງສິດໃນທີ່ດິນ ແລະ ຊັບພະຍາກອນຂອງພວກເຂົາ, ຍຸດຕິການທຳລາຍປ່າໄມ້, ຊອກຫາທາງເລືອກໃນການດຳລົງຊີວິດ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ - ຊາຍ. ໃນຖານະທີ່ເປັນຕ່າງໜ້າ ທີ່ຊື່ສັດ ແລະ ເຊື່ອຖືໄດ້, ພວກເຮົາມີໜ້າທີ່ສຳຄັນໃນການເປັນອົງການຈັດຕັ້ງສາກົນທີ່ສະໜັບສະໜູນ, ແຈ້ງໃຫ້ຊາບ ແລະ ປະສານງານກັບລັດຖະບານ, ຊຸມຊົນ, ທຸລະກິດ, ນັກວິຊາການ ແລະ ອົງການຈັດຕັ້ງທາງສັງຄົມ.

# ສະພາບການຂອງພວກເຮົາ—ສິ່ງທ້າທາຍ ແລະ ໂອກາດ

ພາກພື້ນອາຊີ-ປາຊີຟິກ ປະເຊີນໜ້າກັບສິ່ງທ້າທາຍທາງດ້ານສິ່ງແວດລ້ອມ ແລະ ເສດຖະກິດຫຼາຍດ້ານ, ເຮັດໃຫ້ຄວາມບໍ່ສະເໝີພາບທາງດ້ານສັງຄົມທີ່ມີຢູ່ແລ້ວຮ້າຍແຮງຂຶ້ນ. ວິກິດການດ້ານດິນຟ້າອາກາດ ໂດຍສະເພາະໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ເຮັດໃຫ້ຄວາມປອດໄພດ້ານສະບຽງອາຫານ ແລະ ສາທາລະນະສຸກຕົກຢູ່ໃນຄວາມສ່ຽງ. ຜົນກະທົບທາງເສດຖະກິດຈາກການລະບາດຂອງພະຍາດໂຄວິດ-19 ແລະ ຂໍ້ຂັດແຍ່ງທາງພູມສາດການເມືອງ, ເຊິ່ງເຮັດໃຫ້ຕະຫຼາດບໍ່ມີສະຖຽນລະພາບ ແລະ ສ້າງຄວາມເຄັ່ງຕຶງທາງສັງຄົມຫຼາຍຂຶ້ນ, ຕໍ່ກັບຊັບພະຍາກອນທີ່ມີຢ່າງຈຳກັດ ໄດ້ເຮັດໃຫ້ບັນຫາເຫຼົ່ານີ້ຮ້າຍແຮງຂຶ້ນ. ໃນສະພາບແວດລ້ອມທີ່ຊັບຊ້ອນນີ້, ແມ່ຍິງ, ຊາວເຜົ່າ ແລະ ຊາວໜຸ່ມ ມີຄວາມຫຍຸ້ງຍາກໃນການເຂົ້າຮ່ວມຕ່ອງໂສ້ການສະໜອງແບບຍືນຍົງ. ອົງການລີຄອບ (RECOFTC), ທີ່ມີປະສົບການອັນຍາວນານໃນການປົກປ້ອງທາງສັງຄົມ, ການປົກຄອງ ແລະ ການມີສ່ວນຮ່ວມຂອງຊຸມຊົນ, ມີຄວາມພ້ອມທີ່ຈະສະເໜີຄຳແນະນຳທີ່ສຳຄັນໃນຂົງເຂດເຫຼົ່ານີ້.

ເຖິງວ່າຈະມີສິ່ງທ້າທາຍເຫຼົ່ານີ້, ທົ່ວໂລກໄດ້ມີການສຸມໃສ່ບົດບາດຂອງປ່າໄມ້ຫຼາຍຂຶ້ນ ໃນດ້ານການປ່ຽນແປງດິນຟ້າອາກາດ ແລະ ຊີວະນາໆພັນ. ຄວາມພະຍາຍາມແມ່ນສອດຄ່ອງກັບຄຳໝັ້ນສັນຍາສາກົນ, ເຊັ່ນ: ຂໍ້ຕົກລົງປາຣີ ເພື່ອຂະຫຍາຍພື້ນທີ່ປ່າໄມ້ ແລະ ຫຼຸດຜ່ອນການປ່ອຍອາຍພິດ. ນະໂຍບາຍໃໝ່ ແມ່ນສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນທ້ອງຖິ່ນໃນການຄຸ້ມຄອງປ່າໄມ້, ເຊິ່ງໄດ້ຮັບການສະໜັບສະໜູນຈາກການຫັນປ່ຽນດິຈິຕອນ ແລະ ການຊຸກຍູ້ການປົກຄອງທີ່ໂປ່ງໃສ. ຊ່ອງທາງດ້ານການເງິນທີ່ພົ້ນເດັ່ນຂຶ້ນ ເຊັ່ນ: ກອງທຶນສີຂຽວ ແລະ ກາກບອນເຄດິດ ກໍ່ມີທ່າອ່ຽງທີ່ດີ. ອົງການລີຄອບ (RECOFTC) ຈະໃຊ້ໂອກາດເຫຼົ່ານີ້ເພື່ອການຄຸ້ມຄອງປ່າໄມ້ ແລະ ການມີສ່ວນຮ່ວມຂອງຊຸມຊົນແບບຍືນຍົງ.



# ກ້າວໄປສູ່ອະນາຄົດທີ່ດີກວ່າ: ດ້ວຍ 4 ເປົ້າໝາຍທີ່ສຳຄັນ

ພວກເຮົາຈະສຸມໃສ່ 4 ເປົ້າໝາຍທີ່ເຊື່ອມໂຍງກັນ ເຊິ່ງຈະປະກອບສ່ວນເຂົ້າໃນຜົນໄດ້ຮັບທີ່ພວກເຮົາຢາກເຫັນ: ຊຸມຊົນທີ່ມີຄວາມເຂັ້ມແຂງຕໍ່ ການປ່ຽນແປງດິນຟ້າອາກາດ ມີສ່ວນຮ່ວມໃນການຄຸ້ມຄອງພູມມີທັດປ່າໄມ້ຢ່າງຍືນຍົງ ແລະ ສະເໝີພາບ ໂດຍການຮ່ວມມືກັບພາກສ່ວນກ່ຽວຂ້ອງອື່ນໆ, ເຊິ່ງຮັບປະກັນວ່າພູມມີທັດເຫຼົ່ານີ້ ສະໜອງສິນຄ້າ ແລະ ການບໍລິການທີ່ມີປະໂຫຍດຕໍ່ປະຊາຊົນທັງໝົດໃນຂັ້ນຊຸມຊົນ ແລະ ປະຊາຊົນໃນທ້ອງຖິ່ນອື່ນ, ລວມທັງການປະກອບສ່ວນເຂົ້າໃນປະຕິບັດການດ້ານດິນຟ້າອາກາດ ແລະ ການອະນຸລັກຊີວະນາໆພັນ.

### ເປົ້າໝາຍ 1 - ປັບປຸງການປັບຕົວ ແລະ ການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ

ຊຸມຊົນປະກອບສ່ວນເຂົ້າໃນການປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໂດຍຜ່ານການຄຸ້ມຄອງປ່າໄມ້ແບບຍືນຍົງ, ເສີມສ້າງຄວາມສາມາດໃນການປັບຕົວ, ການອະນຸລັກຊີວະນາໆພັນ ແລະ ການຮັບປະກັນການບໍລິການລະບົບນິເວດລະດັບພູມມີທັດ.

### ເປົ້າໝາຍ 2 – ປັບປຸງຄວາມສະເໝີພາບລະຫວ່າງຍິງ ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ

ຊຸມຊົນ ແລະ ປະຊາຊົນຜູ້ທີ່ດ້ອຍໂອກາດທີ່ສຸດ, ມີສິດໃນການດຳລົງຊີວິດທັງໃນ ແລະ ອ້ອມຮອບປ່າໄມ້ທີ່ອຸດົມສົມບູນ, ມີບົດບາດໃນ ການເປັນຜູ້ນຳ ໃນການຄຸ້ມຄອງພູມມີທັດປ່າໄມ້ແບບຍືນຍົງ ແລະ ໄດ້ຮັບຜົນປະໂຫຍດຢ່າງຍຸດຕິທຳ ທີ່ພູມມີທັດເຫຼົ່ານີ້ສະໜອງໃຫ້.

### ເປົ້າໝາຍ 3 - ປັບປຸງການປົກຄອງ ແລະ ການເຄົາລົບສິດທິ

ຊຸມຊົນປະກອບສ່ວນ ແລະ ໄດ້ຮັບຜົນປະໂຫຍດຈາກອົງການຈັດຕັ້ງ, ນະໂຍບາຍ ແລະ ກົດໝາຍທີ່ປົກປ້ອງ ແລະ ເຄົາລົບສິດທິຂອງພວກເຂົາ. ລັດຖະບານ, ພາກທຸລະກິດ ແລະ ຊຸມຊົນປະຕິບັດຕາມຫຼັກການ ການປົກຄອງທີ່ດີກ່ຽວກັບພູມມີທັດປ່າໄມ້.

### ເປົ້າໝາຍ 4 – ເພີ່ມຜົນປະໂຫຍດທາງດ້ານເສດຖະກິດໃຫ້ແກ່ຊຸມຊົນ

ຊຸມຊົນໄດ້ຮັບຜົນປະໂຫຍດ ຈາກການສ້າງວຽກເຮັດງານທຳທີ່ອີງໃສ່ປ່າໄມ້, ວິສາຫະກິດ, ການເຂົ້າເຖິງການເງິນ ແລະ ການຮ່ວມມືກັບພາກສ່ວນເອກະຊົນ, ເຊິ່ງພັດທະນາໃນເສດຖະກິດສີຂຽວທີ່ມີການປ່ອຍທາດກາກບອນຕ່ຳ.

## ທິດສະດີການປ່ຽນແປງຂອງພວກເຮົາ

ໂດຍຜ່ານທິດສະດີການປ່ຽນແປງ, ພວກເຮົາສ້າງຜົນປະໂຫຍດສູງສຸດທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຈາກພູມມີທັດປ່າໄມ້ໂດຍສ້າງຄວາມເຂັ້ມແຂງໃຫ້ຊຸມຊົນສາມາດຄຸ້ມຄອງ ແລະ ໄດ້ຮັບຜົນປະໂຫຍດຈາກພູມມີທັດເຫຼົ່ານີ້.



## ຍຸດທະສາດ ແລະ ວິທີການຂອງພວກເຮົາ

ຈາກທິດສະດີການປ່ຽນແປງຂອງພວກເຮົາ, 6 ຍຸດທະສາດທີ່ເສີມສ້າງເຊິ່ງກັນ ແລະ ກັນເຫຼົ່ານີ້ ຈະຊ່ວຍໃຫ້ພວກເຮົາບັນລຸເປົ້າໝາຍ, ຮັບຮູ້ຜົນໄດ້ຮັບສະເພາະ ແລະ ສ້າງຜົນກະທົບທີ່ຍືນຍົງ. ໃນຂະນະທີ່ພວກເຮົາປະຕິບັດແຜນຍຸດທະສາດໃນ 5 ປີຕໍ່ໜ້າ, ພວກເຮົາສຸມໃສ່ ການພັດທະນາ ສະພາບແວດລ້ອມທາງດ້ານນະໂຍບາຍທີ່ເອື້ອອຳນວຍ, ເພີ່ມທະວີການສະໜັບສະໜູນດ້ານນະໂຍບາຍ, ເພີ່ມແຫຼ່ງທຶນໃໝ່ ແລະ ສ້າງສິນຄ້າ ແລະ ການບໍລິການທາງສິ່ງແວດລ້ອມທີ່ຍືນຍົງ. ສິ່ງເຫຼົ່ານີ້ຈະສ້າງວົງຈອນທີ່ດີ ແລະ ຂະຫຍາຍທຸລະກິດໃນຂັ້ນຊຸມຊົນ ເຊິ່ງຈະຊຸກຍູ້ການລົງທຶນຂອງລັດ ແລະ ເອກະຊົນເຂົ້າໃນພູມມີທັດປ່າໄມ້ໃນຊຸມຊົນ, ເສີມຂະຫຍາຍການຄຸ້ມຄອງປ່າໄມ້ຊຸມຊົນທີ່ມີຄວາມຍືນຍົງ ແລະ ໃຫ້ຄວາມສຳຄັນຕໍ່ກັບບົດບາດຍິງ - ຊາຍ ແລະ ສະໜັບສະໜູນປະຊາຊົນຜູ້ທີ່ດ້ອຍໂອກາດ.

1. **ຮັບປະກັນວ່າພູມມີທັດປ່າໄມ້ມີສ່ວນໃນການແກ້ໄຂບັນຫາດິນຟ້າອາກາດ**

   ພວກເຮົາຈະສືບຕໍ່ປະຕິບັດ ແລະ ຊຸກຍູ້ການຄຸ້ມຄອງປ່າໄມ້ໃນຊຸມຊົນ ເພື່ອແກ້ໄຂບັນຫາການປ່ຽນແປງຂອງດິນຟ້າອາກາດ ພ້ອມທັງເພີ່ມທະວີຄວາມເຂັ້ມແຂງ ແລະ ການປັບຕົວຂອງປະຊາຊົນໃນທ້ອງຖິ່ນ.

2. **ຮັບປະກັນສິດ ແລະ ການປົກຄອງແບບມີສ່ວນຮ່ວມ**

   ພວກເຮົາຈະກຳນົດ ແລະ ເຮັດວຽກເພື່ອແກ້ໄຂຊ່ອງຫວ່າງ ແລະ ຈຸດອ່ອນໃນກອບກົດໝາຍ. ພວກເຮົາຈະສະໜັບສະໜູນການມີສ່ວນຮ່ວມຫຼາຍຝ່າຍໃນຂະບວນການຕັດສິນໃຈ, ສ້າງຄວາມເຂັ້ມແຂງໃຫ້ເຈົ້າຂອງກຳມະສິດ ລວມທັງກຸ່ມທີ່ດ້ອຍໂອກາດ ໄດ້ມີສ່ວນພົວພັນ, ມີບົດບາດ ແລະ ຮັບຮູ້ສິດຂອງພວກເຂົາ.

3. **ສະໜັບສະໜູນການຂະຫຍາຍຕົວຂອງທຸລະກິດໂດຍອີງໃສ່ພູມມີທັດປ່າໄມ້**

   ພວກເຮົາຈະສືບຕໍ່ເຮັດໃຫ້ຊຸມຊົນສ້າງຕັ້ງ ແລະ ຄຸ້ມຄອງວິສາຫະກິດ ທີ່ຂາຍຜະລິດຕະພັນ ແລະ ການບໍລິການທີ່ກ່ຽວກັບພູມມີທັດປ່າໄມ້. ພວກເຮົາຈະອຳນວຍຄວາມສະດວກ ໃນການເປັນຄູ່ຮ່ວມງານທີ່ສະເໝີພາບ ລະຫວ່າງ ຊຸມຊົນ ແລະ ຜູ້ມີບົດບາດໃນລະບົບຕ່ອງໂສ້ມູນຄ່າ ພ້ອມທັງສົ່ງເສີມຄວາມຮັບຜິດຊອບ ແລະ ການແບ່ງປັນຜົນປະໂຫຍດທີ່ຍຸຕິທຳ.

4. **ການຫາແຫຼ່ງທຶນເພື່ອສ້າງພູມມີທັດປ່າໄມ້ແບບຍືນຍົງ**

   ພວກເຮົາຈະສະແດງໃຫ້ເຫັນເຖິງຜົນປະໂຫຍດທາງດ້ານການເງິນ, ສັງຄົມ ແລະ ສິ່ງແວດລ້ອມຂອງການລົງທຶນໃນການຄຸ້ມຄອງພູມມີທັດປ່າໄມ້ແບບມີສ່ວນຮ່ວມ ແລະ ຍືນຍົງ. ພວກເຮົາຈະສະໜັບສະໜູນຊຸມຊົນໃນການຮັບຮອງເອົາຮູບແບບທຸລະກິດມາໃຊ້ ແລະ ການຄຸ້ມຄອງການເງິນໃນລະດັບຊຸມຊົນ.

5. **ສ້າງສິ່ງຢັ້ງຢືນສຳລັບການຜັກດັນດ້ານນະໂຍບາຍ**

   ພວກເຮົາຈະສືບຕໍ່ໃນການສ້າງ ແລະ ເຜີຍແຜ່ຫຼັກຖານກ່ຽວກັບຜົນປະໂຫຍດ ແລະ ການປະຕິບັດທີ່ດີ ຂອງການຄຸ້ມຄອງ ແລະ ຟື້ນຟູພູມມີທັດປ່າໄມ້ແບບມີສ່ວນຮ່ວມ ແລະ ຍືນຍົງ.

6. **ໃຫ້ປະຊາຊົນມີສ່ວນຮ່ວມກັບບັນຫາພູມມີທັດປ່າໄມ້**

   ພວກເຮົາຈະຍົກສູງການຮັບຮູ້ຂອງຊຸມຊົນທີ່ຮັບຜິດຊອບໃນການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຮັບຮູ້ຄຸນຄ່າຂອງຜະລິດຕະພັນ ແລະ ການບໍລິການປ່າໄມ້ຊຸມຊົນ. ໂດຍສະເພາະໃນບັນດາແມ່ຍິງ, ຊາວໜຸ່ມ, ຊົນເຜົ່າ ແລະ ປະຊາຊົນໃນຂັ້ນທ້ອງຖິ່ນກ່ຽວກັບໂອກາດທາງດ້ານເສດຖະກິດໃນພູມມີທັດປ່າໄມ້ ແລະ ຊຸກຍູ້ໃຫ້ພວກເຂົາມີບົດບາດນຳພາໃນຂະແໜງກະສິກຳ, ປ່າໄມ້ ແລະ ການບໍລິການດ້ານສິ່ງແວດລ້ອມ.

### ຮຽນຮູ້ເພີ່ມຕື່ມ

ອ່ານແຜນຍຸດທະສາດສະບັບເຕັມຂອງ ອົງການລີຄອບ ສຳລັບປີ 2023-2028

**recoftc.org**


**RECOFTC Main Office**

ຕູ້ໄປສະນີ 1111, ໄປສະນີກະເສດສາດ,
ບາງກອກ 10903, ປະເທດໄທ
ໂທ +66 (0)2 940 5700, ແຟັກ +66 (0)2 561 4880
info@recoftc.org
@RECOFTC

**RECOFTC Lao PDR**

ກົມປ່າໄມ້
ຖະໜົນທາດດຳ
ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ +856 (0)21 253 523



**ຜູ້ສະໜັບສະໜູນຂອງພວກເຮົາ**

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

Sweden
Sverige

ວຽກງານຂອງ ອົງການລີຄອບ ແມ່ນເກີດຂຶ້ນໄດ້ໂດຍການສະໜັບສະໜູນຂອງອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດເຊີແລນ (SDC) ແລະ ອົງການຮ່ວມມືເພື່ອການພັດທະນາສາກົນຂອງປະເທດຊູແອັດ (Sida).